# ວິທີຈົດກ່າຍເຂົ້າໃບສອບຖາມແມ່ຍິງ

ພາກຄຳຖາມສຳລັບແມ່ຍິງໃນໄວຈະເລີນພັນແມ່ນປະກອບມີການສອບຖາມ ຂໍ້ມູນທົ່ວໄປ ຂອງ ແມ່ຍິງ, ການ ສັກຢາກັນ ພະຍາດບາດທະຍັກ, ສຸຂະພາບຂອງແມ່ ແລະເດັກເກີດໃໝ່, ພຶດຕິກຳການກິນອາຫານ ແລະ HIV/AIDS. ນັກເດີນສຳຫລວດຈະຕ້ອງໃຊ້ຄວາມພະຍາຍາມທີ່ສຸດ ເພື່ອຈະໄດ້ຮັບຄຳຕອບ ກ່ຽວກັບວຽກງານ ສ່ວນ ຕົວຂອງຜູ້ຍິງ. ຈຶ່ງຂໍຮ້ອງໃຫ້ສະມາຊິກຄົວເຮືອນ ແລະຄົນ ອື່ນອອກຈາກຂົງເຂດນັ້ນ. ຖ້າວ່າ ຜູ້ຕອບ ແມ່ນແມ່ຂອງເດັກ, ກໍຮ້ອງຂໍໃຫ້ຜູ້ຕອບນຳເອົາ ໃບຢັ້ງ ຢືນການເກີດ ແລະບັດສັກຢາກັນ ພະຍາດ (ປຶ້ມຮັກສາສຸຂະພາບ) ທີ່ລາວມີກ່ອນຈະເລີ່ມ ສອບຖາມເພາະທ່ານຈະຕ້ອງໄດ້ກວດເບິ່ງຕົວຈິງບັນດາເອກະສານນັ້ນໃນເວລາທີ່ທ່ານສອບຖາມ ກ່ຽວກັບ ແມ່ ແລະລູກຕ່ຳກວ່າ 5 ປີ ຂອງ ລາວເອງ.

ພາຍຫຼັງທີ່ໄດ້ສຳເລັດ ການສອບຖາມກ່ຽວກັບຄົວເຮືອນແລ້ວ ທ່ານກໍຈະມີໃບສອບຖາມ ໃຊ້ ສະເພາະ ສຳລັບຜູ້ຍິງແຕ່ລະຄົນທີ່ມີໃນຄົວເຮືອນ ທີ່ຢູ່ໃນເກນອາຍຸ 15-45 ປີ.

ກ່ອນອື່ນໝົດ,ນັກເດີນສຳຫລວດຈະຕ້ອງກວດໃຫ້ໝັ້ນໃຈວ່າທ່ານໄດ້ຂຽນຄຳຕອບໃສ່ຢູ່

ແຖວເທິງຂອງ ແບບສອບຖາມສຳລັບແມ່ຍິງໜ້າທຳອິດ (ລະຫັດທີ່ຕັ້ງ ຖືກຕ້ອງແລ້ວ). ຈຶ່ງ ເລີ້ມສຳພາດ ໄປແຕ່ລະຄຳຖາມ ລະອຽດ ດັ່ງລູ່ມນີ້ :

## ໂມດູນ I : ຂໍ້ມູນກ່ຽວກັບແມ່ຍິງ

ຄຳຖາມ1 : ເລກລຳດັບຂອງແມ່ຍິງຄົນນີ້ ? ໂດຍເບິ່ງເລກລຳດັບຕາມບັນຊີ ຄົວເຮືອນ ມາ ລົງໃສ່ເລກທີທີ່ກຳນົດໄວ້

| | | |
|---|---|---|
| 1. ເລກທີປະຈຳຕົວ *(ອີງຕາມບັນຊີລາຍຊື່ ຂອງສະມາຊິກຄົວເຮືອນໃນພາກຂໍ້ມູນຄົວ ເຮືອນ)* | ເລກທີ່........................... ____ ____ | |

ຄຳຖາມ2:ເລກທີຄົວເຮືອນ: ແມ່ນບັນທຶກເອົາ ເລກທີຄົວເຮືອນຈາກການຂື້ນບັນຊີຄົວເຮືອນ ຫຼື ຈາກການ ເລືອກຄົວເຮືອນຕົວແທນ.

| | | |
|---|---|---|
| 2. ເລກທີຄົວເຮືອນ | ເລກທີຄົວເຮືອນ ___ ___ ___ | |

ຄຳຖາມ 3 : ຂຽນຊື່ ແມ່ຍິງ ຈາກບັນຊີຄົວເຮືອນ ຢູ່ແຖວຕັ້ງທີ 2 ມາລົງໃສ່ ( ເພື່ອເປັນການ ບໍ່ໃຫ້ ປົນເປກັນເວລາສຳພາດ).

| | |
|---|---|
| 3. ຊື່ຂອງແມ່ຍິງ ________________________________ | |

ຊື່ນັກເດີນສຳຫຼວດ:  ຢູ່ໃນຂໍ້ນີ້ທ່ານ ຕ້ອງໄດ້ຂຽນຊື່ຂອງທ່ານເອງ ເພາະວ່າທ່ານແມ່ນນັກເດີນສຳຫຼວດ ແລະ ຂຽນ ວັນທີ,ເດືອນ,ປີ ທີ່ທ່ານໄດ້ສຳພາດໃນເວລານັ້ນ.

| ຊື່ນັກເດີນສຳຫຼວດ<br>............................................................ | ວັນ/ເດືອນ/ປີ ຂອງການສຳພາດ<br>__ __ / __ __ / __ __ __ __ |
|---|---|

ຜົນຂອງການສຳພາດ:  ແມ່ນຜົນໄດ້ຮັບຈາກການສຳພາດ ຢູ່ໃນແບບສອບຖາມແມ່ຍິງຄົນນີ້, ມັນຈະມີຫົວຂໍ້ໃຫ້ຂີດວົງມົນອອັນ,ຕົວຢ່າງ:ຖ້າທ່ານສຳພາດແມ່ຍິງສຳເລັດໝົດທຸກຄຳຖາມແມ່ນຂີດວົງມົນອອັນເລກ1:ສຳເລັດ,ຖ້າທ່ານໄດ້ຖືກປະຕິເສດຈາກແມ່ຍິງທີ່ນອນຢູ່ໃນ້ເປົ້າໝາຍສຳຫຼວດໝາຍຄວາມວ່າເຂົາບໍ່ຮ່ວມມືນຳແມ່ນໝາຍເລກ3:ປະຕິເສດ.ທ່ານຕ້ອງເຂົ້າໃຈວ່າ:ໃນຂໍ້ນີ້ແມ່ນມີພຽງຄຳຕອບດຽວ.

| ຜົນຂອງການສຳພາດ<br>(ມີຄຳຕອບດຽວ) | ສຳເລັດ......................................1<br>ບໍ່ຢູ່ເຮືອນ...................................2<br>ປະຕິເສດ....................................3<br>ສຳເລັດບາງສ່ວນ...........................4<br>ບໍ່ພົບເຮືອນ.................................5<br>ອື່ນໆ ( ບອກແຈ້ງ).........................6 |
|---|---|

ຄຳຖາມ 4 : ທ່ານເກີດໃນເດືອນໃດ, ປີໃດ?

ເດືອນ ແລະ ປີເກີດ ເປັນຄຳຖາມທີ່ມີຄວາມໝາຍສຳຄັນເພາະຜົນຂອງ ການສຳຫຼວດ ຫຼາຍອັນ ຈະ ໄດ້ຄິດໄລ່ໂດຍສະເລັ່ຍອາຍຸຂອງແມ່ຍິງເປັນບ່ອນອີງ. ທ່ານຕ້ອງຊອກ ຮູ້ເດືອນ, ປີ ເກີດຂອງແມ່ຍິງ ຫຼື ອາຍຸປີເຕັມທີ່ ຜ່ານມາ.ຖ້າກໍລະນີລາວບໍ່ຮູ້ເດືອນ ໃຫ້ຂີດວົງອ້ອມ ເລກ 98,ບໍ່ຮູ້ປີເກີດ ໃຫ້ຂີດວົງອ້ອມ ເລກ 9998.

| 4. ທ່ານເກີດໃນເດືອນໃດ, ປີໃດ?<br><br>*(ຈົ່ງກວດເບິ່ງບັນຊີລາຍຊື່ຂອງສະມາຊິກຄົວເຮືອນໃນພາກຂໍ້ມູນຄົວເຮືອນ)* | ເດືອນ.................................__ __<br>ບໍ່ຮູ້ເດືອນ..................................98<br>ປີເກີດ.......................__ __ __ __<br>ບໍ່ຮູ້ປີເກີດ.............................9998 | |
|---|---|---|

ຄຳຖາມ 5: ທ່ານອາຍຸຈັກປີ ?

ວິທີການຊອກຫາອາຍຸເຕັມ ໃຫ້ຖາມເບິ່ງ ປີລາວ ແລ້ວສົມທຽບໃນຕາຕະລາງອາຍຸ ໃນເອກກະສານຊ້ອນທ້າຍ. ຫລືອາດຈະຕັ້ງຄຳຖາມ ອື່ນທີ່ແນະນຳບົ່ງຊີ້ບອກອາຍຸຂອງລາວໄດ້ ເຊັ່ນ : ຖາມເຖິງ ວັນເດືອນປີ ທີ່ລາວແຕ່ງງານທຳອິດ ຫລື ວັນເດືອນປີ ທີ່ລາວໄດ້ເກີດລູກຄັ້ງທຳອິດ ; ພະຍາຍາມຖາມໃຫ້ຮູ້ວ່າ ດົນປານ ໃດທີ່ລາວໄດ້ແຕ່ງງານ ຫລື ໄດ້ລູກຜູ້ທຳອິດ. ທ່ານອາດຈະ

ຖາມເບິ່ງ ອາຍຸຂອງລູກຜູ້ທຳອິດທີ່ຍັງມີຊີວິດ ຢູ່ວ່າ ໄດ້ອາຍຸເທົ່າໃດແລ້ວ. *ທ່ານອາດຈະສົມທຽບເອົາອາຍຸຂອງລາວກັບ ອາຍຸຂອງຄົນອື່ນທີ່ຢູ່ໃນຄອບຄົວ. ທ່ານອາດຈະເກັບກຳອາຍຸຂອງ ລາວຈາກການເກີດເຫດການສຳຄັນໃດນຶ່ງໃນສ່ວນຕົວຂອງລາວ ແລະ ກ່ອນນັບເພີ່ມປີໃຊ້ອາຍຸຂອງລາວ ນັບແຕ່ປີນັ້ນມາເພີ່ມໃສ່.* *<u>ເດັດຂາດບໍ່ໃຫ້ປະວ່າງໄວ້.</u>*

*ທ່ານຕ້ອງໃຫ້ມີຄຳຕອບໃສ່ຄຳຖາມນີ້ຖ້າທ່ານບໍ່ສາມາດຮັບຄຳຕອບໂດຍໃຊ້ຄຳຖາມຍ່ອຍຜ່ານມາ, ທ່ານກໍຕ້ອງ ຄາດຄະເນເອົາອາຍຸຂອງລາວລົງໃສ່*

| | | |
|---|---|---|
| 5. ທ່ານ ອາຍຸຈັກປີ ? | ອາຍຸ ເຕັມ.......................... __ __ | |

ຄຳຖາມ 6 :ທ່ານເຄີຍເຂົ້າໂຮງຮຽນຫລືບໍ່? ຈຸດປະສົງຂອງຄຳຖາມນີ້ ແມ່ນເພື່ອໃຫ້ຮູ້ການເຂົ້າຮຽນໜັງສືຢູ່ໃນລະດັບສາມັນສຶກສາ, ການເຂົ້າໂຮງຮຽນຢູ່ນີ້ຍັງລວມເຖິງໂຮງຮຽນສຳລັບສຶກສາຜູ້ໃຫຍ່ ( ປະຊາສຶກສາ),ເຊັ່ນ: ໂຮງຮຽນບຳລຸງວັດທະນະທຳ, ຫຼືໂຮງຮຽນນອກລະບົບຕ່າງໆ ທີ່ມີການຈັດຊັ້ນຮຽນຄັກແນ່ ແລະມີການສອບເສັງຜ່ານຂຶ້ນຊັ້ນຄັກແນ່, ເຖິງຈະບໍ່ໄດ້ຮຽນເຕັມເວລາແຕ່ຮຽນບາງຊົ່ວໂມງເຕັມຫຼັກສູດ ຄືໂຮງຮຽນໃນລະບົບໂຮງຮຽນທົ່ວໄປ.

ຖ້າເຄີຍເຂົ້າ ແມ່ນໃຫ້ຂີດວົງມົນອອ້ມເລກ 1, ຖ້າບໍ່ເຄີຍເຂົ້າ ແມ່ນໃຫ້ຂີດວົງມົນອອ້ມເລກ 2 ແລ້ວຂ້າມໄປຄຳຖາມ8.

| | | |
|---|---|---|
| 6.ທ່ານເຄີຍເຂົ້າໂຮງຮຽນຫລືບໍ່ ? | 1.ແມ່ນ .....................................1<br>2.ບໍ່ແມ່ນ...................................2 | 2 ⇒<br>ຄຳຖາມ 8 |

ຄຳຖາມ7. ລະດັບການສຶກສາສູງສຸດ ທີ່ຈົບແມ່ນຊັ້ນໃດ? ຈຸດປະສົງຂອງຄຳຖາມນີ້ ແມ່ນເພື່ອຢາກຮູ້ລະດັບຂອງການສຶກສາສູງສຸດທີ່ຮຽນຈົບ (ບໍ່ແມ່ນຊັ້ນຮຽນທີ່ບຸກຄົນດັ່ງກ່າວກຳລັງຮຽນຢູ່ເວລາປະຈຸບັນ)

ຕົວຢ່າງ: ຜູ້ຖືກສຳພາດຕອບວ່າ: ຂ້ອຍຮຽນຢູ່ຊັ້ນມັດທະຍົມຕົ້ນປີ2 ແລ້ວຂ້ອຍກໍ່ລາອອກ, ໃນກໍລະນີນີ້ ທ່ານຕ້ອງໝາຍຄຳຕອບວ່າ: 1:ຈົບຊັ້ນປະຖົມ

| | | |
|---|---|---|
| 7. ລະດັບການສຶກສາສູງສຸດທີ່ຈົບແມ່ນຊັ້ນໃດ ? | 1.ປະຖົມ...................................1<br>2.ມັດທະຍົມຕົ້ນ..........................2<br>3.ມັດທະຍົມປາຍ........................3<br>6.ບໍ່ມີລະດັບການສຶກສາ.................6 | |

ຄຳຖາມ8.ທ່ານອ່ານປະໂຫຍກລຸ່ມນີ້ໄດ້ບໍ່? ຄຳຖາມນີ້ແມ່ນເພື່ອ ຢາກທົດສອບຄວາມຮູ້ກ່ຽວກັບການອ່ານຂອງຜູ້ຖືກສຳພາດວ່າ ເຂົາເຈົ້າຈະອ່ານໄດ້ສ່ຳໃດ, ສະນັ້ນທ່ານຕ້ອງໄດ້ເອົາປະໂຫຍກທີ່ທີ່ໄດ້ກຳນົດໃຫ້ຢູ່ໃນແບບສອບຖາມໃຫ້ຜູ້ຖືກສຳພາດອ່ານ.

**ຂໍ້ຄວນລະວັງ:** ທ່ານຕ້ອງກວດຄືນຄຳຖາມ7ເບິ່ງວ່າ: ຖ້າຜູ້ຖືກສຳພາດ ຫາກຮຽນຈົບມັດທະຍົມຕົ້ນ ຫຼື ມັດທະຍົມປາຍແມ່ນໃຫ້ຂາມໄປຖາມ ຢູ່ພາກໂມດູນII ເລີຍ,ຖ້າຈົບປະຖົມຫລືບໍ່ມີລະດັບການສຶກສາ ຈຶ່ງຖາມຢູ່ຄຳຖາມນີ້

| | | |
|---|---|---|
| 8. ທ່ານອ່ານປະໂຫຍກ ລຸ່ມນີ້ໄດ້ບໍ່ ?<br>ຕົວຢ່າງຂອງປະໂຫຍກ:<br>1. ເດັກນ້ອຍກຳລັງອ່ານປື້ມ<br>2. ລະດູຝົນມາຊ້າໃນປີນີ້<br>3. ພໍ່ແມ່ຄວນເອົາໃຈໃສ່ເບິ່ງແຍງລູກຂອງພວກເຂົາ<br>4. ຊາວກະສິກອນເຮັດວຽກຫນັກ | ບໍ່ສາມາດອ່ານໄດ້ຫມົດ.................1<br>ສາມາດອ່ານໄດ້ບາງປະໂຫຍກ........2<br>ສາມາດອ່ານໄດ້ຫມົດປະໂຫຍກ.......3<br>ສາມາດອ່ານພາສາອື່ນໄດ້..............4<br>ຕາບອດ/ປາກກືກ,ມີບັນຫາກ່ຽວກັບສາຍຕາ/ກ່ຽວກັບສຽງ...........................5 | |

## ໂມດູນ II : ສັກຢາກັນບາດທະຍັກ

ເປົ້າຫມາຍຂອງໂມດູນນີ້ ທ່ານຈະຮູ້ເຖິງເລື້ອງການກັນເດັກຈາກພະຍາດບາດ ທະຍັກໂດຍການສັກຢາກັນພະຍາດໃຫ້ແມ່. ການກັນເດັກເກີດໃຫມ່ບໍ່ໃຫ້ເປັນບາດທະຍັກ ແມ່ນງ່າຍດາຍຖ້າວ່າແມ່ຍິງກຳລັງຖືພາ ຫາກໄດ້ຮັບການຄຸ້ມກັນພະຍາດ ຫລື ໄດ້ຮັບການສັກຢາກັນພະຍາດ ຕິດຕໍ່ກັນຫລາຍຄັ້ງ ໂດຍໄລຍະຫ່າງກັນ ທີ່ເຫມາະສົມກ່ອນການເກີດລູກໃຫ້ໃຊ້ຄຳຖາມນີ້ ກັບແມ່ ທີ່ມີລູກເກີດໃຫມ່ຍັງມີຊີວິດ ໃນນຶ່ງປີຜ່ານມາ.

**ຄຳຖາມ 1** ທ່ານໄດ້ມີເອກກະສານ ຫລື ບັດສັກຢາກັນພະຍາດບໍ່ ?

ກ່ອນອື່ນຫມົດ,ໃຫ້ທ່ານຖາມນຳແມ່ຂອງເດັກວ່າມີບັດສັກຢາກັນພະຍາດຫລືເອກກະສານອື່ນໆທີ່ຢັ້ງຢືນການສັກຢາກັນພະຍາດ.ໃຫ້ທ່ານຊອກຫາໃບຢັ້ງຢືນການສັກຢາກັນພະຍາດແລະກໍ່ບັນທຶກລົງສິ່ງທີ່ທ່ານໄດ້ເຫັນ.ຖ້າຫາກວ່າມີບັດສັກຢາກັນພະຍາດກໍ່ໃຫ້ນຳໃຊ້ເພື່ອຕອບຄຳຖາມຕໍ່ໆໄປ

| | | |
|---|---|---|
| 1.ທ່ານມີເອກະສານ ຫລືບັດສັກຢາກັນພະຍາດບໍ່?<br>*ຖ້າມີ, ຈົ່ງຂໍເອົາມາໃຫ້ເບິ່ງເພື່ອຊ່ວຍຕອບຄຳຖາມດັ່ງຕໍ່ໄປນີ້:* | ມີ ( ເຫັນບັດ)..........................................1<br>ມີ(ບໍ່ເຫັນບັດ)..........................................2<br>ບໍ່ມີ......................................................3<br>ບໍ່ຮູ້ຈັກ.................................................9 | |

ຄຳຖາມ2: ເວລາທ່ານຖືພາຄັ້ງແລ້ວນີ້,ທ່ານໄດ້ຮັບການສັກຢາກັນພະຍາດເພື່ອປ້ອງກັນບໍ່ໃຫ້ເດັກຊັກເວລາເກີດບໍ່ ? (ການສັກຢາກັນບາດທະຍັກ/ກັນໝັ່ງງ, ສັກຢູ່ກົກແຂນ).

ໃຫ້ຖາມວ່າໃນໄລຍະການຖືພາຄັ້ງແລ້ວນີ້ລາວໄດ້ຮັບການສັກຢາກັນບາດທະຍັກບໍ່. ຖ້າຕອບວ່າໄດ້ສັກ ໃຫ້ໝາຍ ວົງມົນອ້ອມເອົາຄຳຕອບ (ໄດ້ສັກ). ຖ້າຫາກຕອບວ່າບໍ່ ຫຼື " ບໍ່ຮູ້ຈັກ "

ກໍໃຫ້ຂີດໃສ່ເລກລະຫັດຄໍາຕອບ ແລະຍ້າຍໄປຄໍາຖາມ 4, ໂດຍຂີດເສັ້ນໄປຫາຄໍາຖາມອື່ນ...ຕາມລູກສອນບອກ.

| | | |
|---|---|---|
| 2.ເວລາທ່ານຖືພາຄັ້ງແລ້ວ, ທ່ານໄດ້ຮັບການສັກຢາກັນພະຍາດເພື່ອກັນບໍ່ໃຫ້ເດັກຊັກຫລັງຈາກເກີດຫລືບໍ່? ( ການສັກຢາກັນບາດທະຍັກ/ກັນໝັ້ງງ, ສັກຢູ່ກົກແຂນ) | ໄດ້ສັກ.................................................1<br>ບໍ່ໄດ້ສັກ..............................................2<br><br>ບໍ່ຮູ້ຈັກ..................................................9 | <br>2 ⇒ ຂໍ້ 4<br><br>9 ⇒ ຂໍ້ 4 |

<u>ຄໍາຖາມ 3</u> ຖ້າຕອບວ່າ**“**ໄດ້ສັກ**”** ໃນຄໍາຖາມທີ 2, ໃຫ້ຖາມຕໍ່ວ່າ ໄລຍະຖືພາມານຄັ້ງແລ້ວນີ້ທ່ານໄດ້ຮັບການ ສັກຢາ ກັນບາດທະຍັກ ຈັກຄັ້ງ ?

ບັນທຶກຈໍານວນຄັ້ງທີ່ໄດ້ສັກລົງໃສ່ກອບຄໍາຕອບ. ຖ້າແມ່ຕອບວ່າ 2 ຄັ້ງ, ທ່ານບໍ່ຈໍາເປັນຕ້ອງຖາມເວລາໃດທີ່ໄດ້ ສັກຜ່ານມາ ພຽງແຕ່ຂຽນລົງຄໍາຕອບ 02 ລົງໃສ່ກອບຄໍາຕອບ, ແລ້ວຍຸດພຽງເທົ່ານີ້ ແລະກໍຍ້າຍໄປໜ້າຕໍ່ໄປພ້ອມທັງຂີດເສັ້ນຜ່ານໄປຄໍາຖາມ ອື່ນຂອງພາກນີ້.

ຖ້າຕອບວ່າ **“** ບໍ່ມີຈັກຄັ້ງ **”** ຫຼື **“** ເຄີຍສັກຄັ້ງດຽວ **”** ໃນໄລຍະຖືພາຄັ້ງແລ້ວນີ້ ຫຼື **“** ບໍ່ຮູ້ຈັກ **”** ໃຫ້ຖາມຕໍ່ຄໍາຖາມ 4 ຕໍ່ໄປ.

| | | |
|---|---|---|
| 3. *ຖ້າໄດ້ສັກ:* ໄລຍະຖືພາຄັ້ງຫຼ້າສຸດທ່ານໄດ້ຮັບການສັກຢາກັນພະຍາດຈັກຄັ້ງ? | ຈໍານວນຄັ້ງທີ່ໄດ້ສັກ........................___ ___<br>ບໍ່ຮູ້ຈັກ................................................98 | 98⇒ຂໍ້ 4 |

| |
|---|
| ຈົ່ງເບິ່ງຈໍານວນຄັ້ງທີ່ໄດ້ສັກຢາກັນພະຍາດໃນຄໍາຕອບຂໍ້ 3 ວ່າ:<br>*ຢ່າງໜ້ອຍໄດ້ຮັບການສັກຢາ ກັນບາດທະຍັກ/ກັນໝັ້ງງ* ***ສອງຄັ້ງ*** *ໃນການຖືພາຄັ້ງແລ້ວນີ້ ⇒ ຂ້າມໄປໂມດູນ III ສຸຂະພາບຂອງແມ່ ແລະ ເດັກເກີດໃໝ່*<br>*ໄດ້ຮັບການສັກຢາ ກັນບາດທະຍັກ/ກັນໝັ້ງງ* ***ໜ້ອຍກ່ວາສອງຄັ້ງ*** *ໃນການຖືພາຄັ້ງແລ້ວ⇒ ໃຫ້ສືບຕໍ່ຖາມຂໍ້ 4* |

<u>ຄໍາຖາມ4</u>. ກ່ອນການຖືພາຄັ້ງແລ້ວນີ້ທ່ານໄດ້ຮັບການສັກຢາກັນພະຍາດບາດທະຍັກບໍ່? ລວມທັງການຖືພາຄັ້ງກ່ອນ ຫຼື ລະຫວ່າງການຖືພາ ) ຖ້າຫາກຕອບວ່າໄດ້ສັກໃຫ້ສືບຕໍ່ຖາມຄໍາຖາມ 5, ຖ້າຕອບວ່າບໍ່ໄດ້ສັກ ຫລືບໍ່ຮູ້ຈັກໃຫ້ຂ້າມໄປ ໂມດູນ III.

| | | |
|---|---|---|
| 4. ກ່ອນການຖືພາຄັ້ງແລ້ວ ທ່ານໄດ້ຮັບການສັກຢາກັນພະຍາດໃນເວລາໃດນຶ່ງກ່ອນການຖືພາຄັ້ງແລ້ວນີ້ ລວມທັງໄລຍະກ່ອນຖືພາຄັ້ງກ່ອນ ຫລືລະຫວ່າງຖືພາ? | ໄດ້ສັກ..................................................1<br>ບໍ່ໄດ້ສັກ...............................................2<br><br>ບໍ່ຮູ້ຈັກ..................................................8 | <br>2 ⇒ ໂມດູນIII<br>8 ⇒ ໂມດູນIII |

ຄຳຖາມ 5  ຖ້າຕອບວ່າ " ໄດ້ສັກ " ທ່ານໄດ້ສັກຈັກຄັ້ງ ? ກ່ອນການຖືພາຄັ້ງແລ້ວນີ້ ຖ້າແມ່ຕອບວ່າ " ພຽງຄັ້ງດຽວ " ໄດ້ຮັບການສັກຢາ, ໃຫ້ຕັ້ງຄຳຖາມ ສອບຖາມຕື່ມ ເຊັ່ນ : ຖາມຫາຈຳນວນຄັ້ງທີ່ໄດ້ຮັບ ເວລາຖືພາຄັ້ງກ່ອນໆ ຫຼື ລະຫວ່າງການຖືພາ. ແລ້ວບັນ ທຶກ ຄຳຖາມລົງ ໃສ່ບ່ອນຕອບ ດັ່ງຄຳຖາມ 2 ແລະ 3 ຂ້າງເທິງນີ້.

| | | |
|---|---|---|
| 5. *ຖ້າໄດ້ສັກ:* ທ່ານໄດ້ຮັບການສັກຢາກັນພະຍາດຈັກຄັ້ງ? | ຈຳນວນຄັ້ງທີ່ໄດ້ສັກ........................___ ___ | |

ຄຳຖາມ 6 ກ ທ່ານໄດ້ຮັບການສັກຢາກັນພະຍາດຄັ້ງສຸດທ້າຍໃນເດືອນ/ປີໃດ ?

ໃຫ້ຖາມເຖິງເດືອນ/ປີ ທີ່ແມ່ໄດ້ຮັບການສັກຢາກັນບາດທະຍັກຄັ້ງສຸດທ້າຍ ກ່ອນໄລຍະຖືພາຄັ້ງແລ້ວນີ້ ຖ້າວ່າແມ່ບໍ່ຈື່ເດືອນ ກໍຂີດວົງມົນໃສ່ເລກ 98 " ບໍ່ຈື່ເດືອນ " ຫຼືວ່າແມ່ບໍ່ຈື່ ປີ ກໍຂີດວົງມົນໃສ່ເລກ 9998 " ບໍ່ຈື່ປີ " .

| | | |
|---|---|---|
| 6. ທ່ານໄດ້ຮັບການສັກຢາເທື່ອສຸດທ້າຍໃນເດືອນ/ປີ? | ວັນທີ່ໄດ້ຮັບເທື່ອສຸດທ້າຍ<br>ເດືອນ....................................... __ __<br>ບໍ່ຈື່ ເດືອນ........................................98<br>ປີ.................................. __ __ __ __<br>ບໍ່ຮູ້ປີ..........................................9998 | |

ຄຳຖາມ7 .ໃຫ້ລວມຈຳນວນຄັ້ງທີ່ໄດ້ຮັບການສັກຢາທີ່ແມ່ໄດ້ຕອບມາ(ໃຫ້ບວກເອົາຄຳຖາມ 3 ແລະ 5 ເຂົ້າກັນ) ແລະກຳໝາຍຈຳນວນລວມລົງໃສ່ກອບຂ້າງຄຳຖາມ 7 ເຊິ່ງແມ່ນຈຳນວນ ລວມທັງໝົດທີ່ໄດ້ສັກ.

| | | |
|---|---|---|
| 7. ຈົ່ງລວມຈຳນວນຄັ້ງທີ່ໄດ້ຮັບການສັກຢາກັນພະຍາດໃນຊີວິດຂອງຜູ້ກ່ຽວທີ່ໄດ້ຕອບມາໃນ ຂໍ້ 3 ແລະ ຂໍ້ 5 ເຂົ້າກັນ | ຈຳນວນຄັ້ງທີ່ໄດ້ສັກທັງໝົດ.............___ ___ | |

## ໂມດູນ III: ສຸຂະພາບຂອງແມ່ແລະເດັກເກີດໃໝ່

ເປົ້າໝາຍຂອງພາກນີ້ ແມ່ນເພື່ອຢາກຮູ້ຂໍ້ມູນກ່ຽວກັບສຸຂະພາບຂອງແມ່ ແລະເດັກເກີດໃໝ່.ຈະໄດ້ຖາມວ່າໄລຍະແມ່ຖືພາ,ແລະການເກີດລູກ ແມ່ໄດ້ຮັບການດູແລຮັກສາປິ່ນປົວແລະມີສຸຂະພາບດີປານໃດ.

ຄຳຖາມ 1 ທ່ານໄດ້ຮັບຢາໄວຕາມິນອາຄືແນວນີ້ບໍ່ໃນສອງເດືອນທຳອິດຫລັງຈາກເກີດລູກໃໝ່ ?

ຖ້າເຄີຍໄດ້ຮັບຢາຫຼາຍຊະນິດ, ຜູ້ສອບຖາມຄວນກວດເບິ່ງຢາແຕ່ລະຊະນິດ. ຂະໜາດຢາທີ່ແມ່ລູກ ອ່ອນ ໄດ້ຮັບແມ່ນ 200.000 IU ວິຕາມິນອາ ທີ່ຖືກຍາຍໃຫ້ແມ່ລູກອ່ອນ ແມ່ນຖືກສົ່ງໄປຫາລູກ ແລະ ສາມາດບຳລຸງຖານະສຸຂະພາບ ຂອງແມ່ ແລະລູກໄດ້. ຕ້ອງເອົາເມັດຢາໃຫ້ແມ່ລູກອ່ອນເບິ່ງ ແລ້ວໝາຍຄຳ ຕອບລົງໃສ່ບ່ອນຕອບ.

| | | |
|---|---|---|
| 1. ທ່ານໄດ້ຮັບຢາວິຕາມິນ A ຄືແນວນີ້ ຫລືບໍ່ ໃນສອງເດືອນທຳອິດຫລັງຈາກ ເກີດລູກໃໝ່?<br>*ຈົ່ງເອົາ ຢາເມັດວິຕາມິນ A 200,000 IU ໃຫ້ເບິ່ງ* | ໄດ້ຮັບ............................................1<br>ບໍ່ໄດ້ຮັບ..........................................2<br><br>ບໍ່ຈື່/ບໍ່ຮູ້ຈັກ......................................9 | |

<u>ຄຳຖາມ</u>2 ຄຳຖາມນີ້ອາດມີຫລາຍຄຳຕອບ. ການຝາກທ້ອງແມ່ນການກວດສຸຂະພາບຂອງແມ່ມານ ເພື່ອຄົ້ນບັນຫາ/ຫຼືອາການສິນທີ່ກ່ຽວຂອງກັບການຖືພາ ແລະ ການເກີດລູກ. ແມ່ມານທຸກຄົນຄວນໄດ້ຮັບການກວດສຸຂະພາບຢ່າງເປັນປະຈຳ. ຄຳຖາມນີ້ແມ່ນການຖາມຫາສຸຂະພາບກ່ອນເກີດລູກທີ່ແພດໄດ້ບໍລິການຮັກສາໃຫ້ແມ່ມານການກວດກາສະເພາະແກ່ການຖືພາເທົ່ານັ້ນ ແລະ ບໍ່ແມ່ນເຫດຜົນອື່ນ. ຄຳຖາມນີ້ແມ່ນມີ 2ພາກສ່ວນເພາະວ່າ : ຖ້າຄຳຕອບວ່າ **"**ເຄີຍໄດ້ໄປ ກວດສຸຂະພາບ**"** ທ່ານຕ້ອງຖາມວ່າລາວໄດ້ກວດສຸຂະພາບນຳໃຜ.ໃຫ້ຖາມວ່າລາວໄດ້ກວດນຳໃຜແດ່ ແລະ ກໍບັນທຶກຄຳຕອບລົງໄວ້. ຖ້າທ່ານບໍ່ໝັ້ນໃຈວ່າບຸກຄົນທີ່ຢູ່ໃນຄຳຕອບຫາກບໍ່ມີໃນຄຳຕອບ, ກໍໃຫ້ບັນທຶກຄຳຕອບລົງໃສ່ບ່ອນຄຳຕອບ**"**ອື່ນໆ**"**ແລະກໍຂີດວົງມົນກວມໃສ່ 6. ຖ້າວ່າລາວບໍ່ເຄີຍໄດ້ໄປກວດບ່ອນໃດເລີຍ ກໍໝາຍຄຳຕອບວົງມົນໃສ່ 8.

| | | |
|---|---|---|
| 2.ທ່ານໄດ້ໄປກວດສຸຂະພາບຫລືຝາກທ້ອງນຳໃຜຫລືບໍ່ໃນໄລຍະຖືພາຄັ້ງນີ້?<br>*ຖ້າວ່າໄດ້ໄປ:* ທ່ານໄດ້ກວດນຳໃຜ?<br><br>ມີໃຜອີກບໍ່?<br><br><br>*ຈົ່ງຖາມຕາມຄຳຕອບທີ່ໃຫ້ແລະໝາຍທຸກຄຳຕອບທີ່ໄດ້ຮັບ* | **ພະນັກງານແພດ:**<br>ທ່ານໝໍ.........................................1<br>ພະຍາບານ/ຜະດຸງຄັນ....................2<br>ຜະດຸງຄັນຊັ້ນຕົ້ນ.........................3<br>**ຜູ້ອື່ນໆ**<br>ໝໍຕຳແຍ...................................4<br>ອາສາສະໝັກບ້ານ........................5<br>ພີ່ນ້ອງ/ໝູ່ເພື່ອນ.............................6<br>ອື່ນໆ(ຈົ່ງບອກແຈ້ງ)_______________7<br>ບໍ່ໄດ້ໄປກວດ/ບໍ່ໄດ້ໄປຝາກ................8 | |

<u>ຄຳຖາມ 3</u>: ໃນຕອນທີ່ທ່ານໄປກວດສຸຂະພາບ ຫຼື ຝາກທ້ອງ,ທ່ານໝໍໄດ້ເຮັດສິ່ງເລົ່ານີ້ບໍ່ ? ຄຳຖາມນີ້ ແມ່ນມີຄວາມໝາຍວ່າ: ໃນເວລາທີ່ ຜູ້ຖືກສຳພາດໄປຝາກທ້ອງນັ້ນ, ທ່ານໝໍໄດ້ກວດສຸຂະພາບໃຫ້ໃນລະດັບໃດ. ນັກເດີນສຳຫຼວດຕ້ອງໄດ້ອ່ານຄຳຕອບໃຫ້ຜູ້ຖືກສຳພາດຟັງ. ຄຳຖາມນີ້ ສາມາດຕອບໄດ້ຫຼາຍຄຳຕອບ.

| | | |
|---|---|---|
| **3. ໃນຕອນທີ່ທ່ານໄປກວດສຸຂະພາບ ຫຼື ຝາກທ້ອງ,ທ່ານໝໍໄດ້ເຮັດສິ່ງເລົ່ານີ້ບໍ່ ?** | ຊັ່ງນໍ້າໜັກ........................................1<br>ແທກຄວາມດັນເລືອດ...........................2<br>ກວດຍ່ຽວ..........................................3<br>**ກວດເລືອດ.......................................4** | |

ຄຳຖາມ 4: ໃນລະຫວ່າງທີ່ທ່ານໄປກວດສຸຂະພາບ ຫຼື ຝາກທ້ອງ, ທ່ານໄດ້ຮັບຂໍ້ມູນຂ່າວສານ ຫຼື ການແນະນຳກ່ຽວກັບໂລກເອດສ໌ ຫຼືໄວຣັດເອດສ໌ບໍ່? ຄຳຖາມນີ້ແມ່ນຖາມເຖິງຂໍ້ແນະນຳຈາກທ່ານໝໍທີ່ມີຕໍ່ຜູ້ຖືກສຳພາດ ກ່ຽວກັບຄວາມຮູ້ດ້ານໂລກເອດສ໌ ແລະວິທີປ້ອງກັນ,

| | | |
|---|---|---|
| **4.ໃນລະຫວ່າງທີ່ທ່ານໄປກວດສຸຂະພາບ ຫຼື ຝາກທ້ອງ, ທ່ານໄດ້ຮັບຂໍ້ມູນຂ່າວສານ ຫຼື ການແນະນຳ ກ່ຽວກັບໂລກເອດສ໌ ຫຼື ໄວຣັດ ເອດສ໌ ບໍ່ ?** | ໄດ້ຮັບ..............................................1<br>ບໍ່ໄດ້ຮັບ...........................................2<br><br>**ບໍ່ຮູ້................................................8** | |

ຄຳຖາມ5: ຄຳຖາມນີ້ແມ່ນໃຫ້ທ່ານຖາມພຽງແຕ່ວ່າ: ທ່ານໝໍໄດ້ກວດຫາເຊື້ອໂລກເອດສ໌ໃຫ້ຜູ້ຖືກສຳພາດບໍ່ໃນລະຫວ່າງທີ່ຜູ້ກ່ຽວໄປກວດສຸຂະພາບຫຼືໄປຝາກທ້ອງ.

| | | |
|---|---|---|
| **5. ຂ້າພະເຈົ້າ ບໍ່ຕ້ອງການຢາກຮູ້ຜົນໄດ້ຮັບ, ແຕ່ວ່າຂ້າພະເຈົ້າຈະຖາມວ່າ: ໃນລະຫວ່າງທີ່ທ່ານໄປກວດສຸຂະພາບຫຼືຝາກທ້ອງນັ້ນ, ທ່ານໝໍໄດ້ກວດຫາເຊື້ອໄວຣັດເອດສ໌(HIV/AIDS) ບໍ່ ?** | ໄດ້ກວດ............................................1<br>ບໍ່ໄດ້ກວດ.........................................2<br><br>**ບໍ່ຮູ້................................................8** | |

ຄຳຖາມ6: ຖ້າຫາກຜູ້ຖືກສຳພາດຕອບວ່າ: ທ່ານໝໍໄດ້ກວດຫາເຊື້ອໂລກເອດສ໌ໃຫ້ ,ແມ່ນໃຫ້ທ່ານຖາມຕໍ່ໃນຄຳຖາມນີ້ວ່າ:ຜູ້ຖືກສຳພາດນັ້ນໄດ້ຮັບຜົນຂອງການກວດບໍ່?(ຫ້າມເດັດຂາດບໍ່ໃຫ້ນັກເດີນສຳຫຼວດຖາມເຖິງຜົນໄດ້ຮັບຈາກການກວດຫາເຊື້ອດັ່ງກ່າວ).

| | | |
|---|---|---|
| **6. ຂ້າພະເຈົ້າ ບໍ່ຕ້ອງການຢາກຮູ້ຜົນໄດ້ຮັບ, ແຕ່ວ່າ ຂ້າພະເຈົ້າຈະຖາມວ່າ: ທ່ານໄດ້ຮັບຜົນກວດບໍ່?** | ໄດ້ຮັບ............................................1<br>ບໍ່ໄດ້ຮັບ.........................................2<br>**ບໍ່ຮູ້..............................................8** | |

ຄຳຖາມ7: ໃຜເປັນຜູ້ຊ່ວຍເກີດລູກໃຫ້ທ່ານ, ໃນການເກີດຄັ້ງສຸດທ້າຍ?
ຄຳຖາມນີ້ຕ້ອງມີແຕ່ຄຳຕອບດຽວ.ຖ້າຫາກວ່າແມ່ບໍ່ຮູ້ວ່າຖານະຜູ້ຊ່ວຍເອົາລູກອອກນັ້ນແມ່ນໃຜແທ້ຕົວຢ່າງ: ຖ້າວ່າລາວບໍ່ຮູ້ວ່າຜູ້ຊ່ວຍເກີດເປັນພະຍາບານ ຫລືເປັນໝໍຕຳແຍ, ກໍໃຫ້ຖາມເຈາະຈີ້ມພີ້ມເຕີມອີກ. ໃຫ້ບັນທຶກໝົດທຸກຄົນທີ່ໄດ້ຮ່ວມ ຊ່ວຍເກີດ, ຖ້າທ່ານບໍ່ແນ່ໃຈວ່າ ຈະຈີດເອົາທຸກຄົນທີ່ຕອບ ອອກມາລົງໃສ່ບ່ອນໃດ, ກໍໃຫ້ຂຽນຕອບລົງໃສ່ບ່ອນ **"ອື່ນໆ"** ແລະຂີດ ອ້ອມ ເອົາເລກ 6. ຖ້າບໍ່ມີໃຜຊ່ວຍເກີດ ກໍໝາຍຂີດອ້ອມເອົາ ເລກ 0.

| | | |
|---|---|---|
| 7.ໃຜເປັນຜູ້ຊ່ວຍເກີດລູກໃຫ້ທ່ານ, ໃນການເກີດຄັ້ງສຸດທ້າຍ?<br><br>*ຈົ່ງຖາມຕາມຄຳຕອບທີ່ໃຫ້ແລະໝາຍທຸກຄຳຕອບທີ່ໄດ້ຮັບ* | ທ່ານໝໍ..........................................1<br>ພະຍາບານ/ຜະດຸງຄັນ........................2<br>ຜະດຸງຄັນຊັ້ນຕົ້ນ..............................3<br>**ຜູ້ອື່ນໆ**<br>ໝໍຕຳແຍ........................................4<br>ພີ່ນ້ອງ/ໝູ່ເພື່ອນ..............................5<br>ອື່ນໆ (ຈົ່ງບອກແຈ້ງ)______________6<br>**ບໍ່ມີໃຜຊ່ວຍເກີດ..............................0** | |

ຄຳຖາມ 8: ທ່ານເກີດລູກ(ຊື່ເດັກ) ຢູ່ໃສ ?

ຄຳຖາມນີ້ແມ່ນຕ້ອງການຢາກຮູ້ເຖິງຄວາມປອດໄພຂອງແມ່ໃນການເກີດລູກ, ສະນັ້ນມັນຈື່ງຈຳເປັນຕ້ອງໄດ້ຖາມເຖິງສະຖານທີ່ ທີ່ແມ່ເກີດລູກ. ໃຫ້ທ່ານຂຽນ ຊື່ ເດັກທີ່ແມ່ໄດ້ເກີດໄນເວລານັ້ນພ້ອມທັງຂີດວົງມົນອອ້ມເອົາຄຳຕອບທີ່ຖືກຕ້ອງ ( ຄຳຖາມນີ້ມີພຽງແຕ່ ຄຳຕອບດຽວ).

| | | |
|---|---|---|
| 8. ທ່ານເກີດລູກ(ຊື່ເດັກ) ຢູ່ໃສ ?<br><br><br>**ຊື່ ຂອງເດັກ_________________** | ຢູ່ເຮືອນຂອງທ່ານ...............................11<br>ຢູ່ເຮືອນຄົນອື່ນ...................................12<br>ໂຮງໝໍ..............................................21<br>ຄຣີນິກ / ສຸກສາລາ...............................22<br>ສູນຮັກສາສຸກຂະພາບອື່ນໆ( ບອກແຈ້ງ)...26<br>ໂຮງໝໍເອກະຊົນ................................31<br>ຄຣີນິກເອກະຊົນ................................32<br>ຢູ່ເຮືອນຂອງໝໍຕຳແຍ..........................33<br>ສູນຮັກສາສຸກຂະພາບເອກະຊົນອື່ນໆ<br>( ບອກແຈ້ງ).......................................36<br>**ອື່ນໆ( ບອກແຈ້ງ)...............................96** | |

<u>ຄຳຖາມ 9:</u> ເວລາລູກທ່ານ(ຊື່ເດັກ)ເກີດອອກມາລາວມີຕົນຕົວໃຫຍ່,ນ້ອຍປານໃດ?
ເດັກທີ່ມີນ້ຳໜັກຕ່ຳລຸດເກນໃນມື້ເກີດມີອັດຕາສ່ຽງຕໍ່ພະຍາດ ແລະຕໍ່ການຕາຍສູງກວ່າເດັກອື່ນໆ. ແມ່ຈະໄດ້ ຕອບຄຳຖາມກ່ຽວກັບນ້ຳໜັກຂອງເດັກ ແລະຖ້າວ່າເດັກບາງຄົນຫາກ ຍັງບໍ່ເຄີຍໄດ້ຖືກຊັ່ງນ້ຳໜັກ ຈັກເທື່ອເລີຍ ແຕ່ມື້ເກີດ, ເຮົາອາດຈະເອົານ້ຳໜັກໃຫຍ່ນ້ອຍຂອງເດັກໃນເວລາເກີດກໍໄດ້. ພວກເຮົາສາມາດໄດ້ຮັບການບົ່ງບອກຂະໜາດໃຫຍ່ນ້ອຍຂອງເດັກດ້ວຍຮູບການສັງເກດຂອງແມ່ ກໍຕໍ່ເມື່ອຄຳໃຫ້ການຕ່າງໆຈາກແມ່ຫາກໄດ້ຖືກ ສັງລວມວິເຄາະແລ້ວໂດຍສຳເລັດ. ຂ່າວດັ່ງກ່າວຈະບົ່ງບອກການສະເລັ່ຍນ້ຳໜັກຂອງເດັກໃນມື້ເກີດ.

ໃຫ້ອ່ານແຕ່ລະຄຳຕອບໃຫ້ແມ່ຟັງຢ່າງລະອຽດຕາມທ້ອງຖິ່ນ. ນີ້ແມ່ນຄຳເຫັນສ່ວນຕົວຂອງແມ່ທີ່ມີຕໍ່ຂະນາດໃຫຍ່ນ້ອຍຂອງເດັກເຂົາເອງ. ເຖິງແມ່ນລາວຈະຮູ້ວ່ານ້ຳໜັກມື້ເກີດຂອງລູກລາວແລ້ວກໍ່ຕາມ, ຈົ່ງບອກລາວວ່າພວກເຮົາພຽງແຕ່ຢາກຈະຮູ້ຈາກຄວາມເຫັນຂອງລາວວ່າເກີດອອກມາລູກລາວ } ໃຫຍ່ຫຼາຍ ໝາຍເຖິງ ນ້ຳໜັກຂອງເດັກທີ່ຊັ່ງຕອນເກີດນັ້ນ ຫລາຍກວ່າ 3.5 ກິໂລກລາມ }ເກນ**ປົກກະຕິ** ໝາຍເຖິງນ້ຳໜັກ ທີ່ຊັ່ງຕອນເກີດນັ້ນ ປະມານລະຫວ່າງ 2.5 ຫາ 3.5 ກິໂລ ກລາມ. ສ່ວນ } ນ້ອຍຫຼາຍ ແມ່ນຫລຸດ 2.5 ກິໂລກລາມ. ຖ້າຜູ້ກ່ຽວຫາກບໍ່ສາມາດຕອບໄດ້, ທ່ານບໍ່ຄວນເດົາເອົາຄຳຕອບທີ່ອີງໃສ່ຂ່າວຄາວຂອງນ້ຳໜັກເດັກໃນມື້ເກີດ ຫຼືອີງໃສ່ຮູບຮ່າງຂອງເດັກນ້ອຍນັ້ນເລີຍ; ຂີດອ້ອມເອົາເລກ 8 } ບໍ່ຮູ້ .

| | | |
|---|---|---|
| 9. ເວລາລູກທ່ານ(ຊື່ເດັກ)ເກີດອອກມາລາວມີຕົນຕົວໃຫຍ່,ນ້ອຍປານໃດ?<br><br>***(ຈົ່ງອ່ານແຕ່ລະຄຳຕອບກ່ອນໝາຍ)*** | ຕົວໃຫຍ່ຫລາຍ....................................1<br>ໃຫຍ່ກ່ວາເດັກທົ່ວໄປ.............................2<br>ຄືເດັກທົ່ວໄປ.......................................3<br>ນ້ອຍກ່ວາເດັກທົ່ວໄປ............................4<br>ນ້ອຍຫລາຍ........................................5<br>**ບໍ່ຮູ້ຈັກ/ບໍ່ຈື່..........................................8** | |

ຄຳຖາມ 10: (ຊື່ເດັກ)ໄດ້ຖືກຊັ່ງນ້ຳໜັກໃນເວລາເກີດ ຫລື ບໍ່? ຖ້າວ່າເດັກບໍ່ໄດ້ຖືກຊັ່ງນ້ຳໜັກ ຫຼືບໍ່ຮູ້ນ້ຳໜັກຂອງເດັກ ກໍໃຫ້ ຂີດວົງມົນອອ້ມ ເລກ2 ບໍ່ໄດ້ຊັ່ງ ຫຼື ບໍ່ຮູ່ຈັກແມ່ນ ເລກ8 ແລ້ວຜ່ານໄປຫາຄຳຖາມ 12.

| | | |
|---|---|---|
| **10. (ຊື່ເດັກ)ໄດ້ຖືກຊັ່ງນ້ຳໜັກໃນເວລາເກີດ ຫລື ບໍ່?** | ໄດ້ຊັ່ງ.................................................1<br>ບໍ່ໄດ້ຊັ່ງ.............................................2<br>**ບໍ່ຮູ້ຈັກ..............................................8** | <br>2⇒ ຄຖ12<br>**8⇒ ຄຖ12** |

ຄຳຖາມ 11 : ກໍລະນີເດັກໄດ້ຊັ່ງນ້ຳໜັກໃນເວລາເກີດ, ນັກເດີນສຳຫລວດຕ້ອງ ກວດເບິ່ງບັດ ຫລືປື້ມຕິດຕາມພະຍາດຂອງເດັກເວລາເກີດ. ຖ້າບໍ່ມີເອກກະສານ ແມ່ນໃຫ້ຖາມແມ່ລາວເອງ.ຖ້າໄດ້ຖືກສັ່ງນ້ຳໜັກ, ບັນທຶກນ້ຳໜັກເດັກເປັນ ກິໂລກຣາມ. ໃນກໍລະນີທີ່ບໍ່ໄດ້ບັນທຶກໄວ້ ໃຫ້ຂຽນຕອບລົງໃສ່ແຕ່ບ່ອນດຽວ ແລະໃຫ້ບັນທຶກເອົາແຕ່ນ້ຳໜັກທີ່ມີການບັນທຶກເປັນຕົ້ນຕໍ ຖ້າມີ. ຖ້າວ່າບໍ່ມີບັດບັນທຶກ ແລະແມ່ບໍ່ສາມາດຈຳໄດ້ນ້ຳໜັກຂອງເດັກ, ຈົ່ງບັນທຶກເອົາການຄາດຄະເນຈາກແມ່ໄວ້ . ໃຫ້ຂີດອ້ອມເອົາຄຳຕອບ } ບໍ່ຮູ້ຈັກ ຖ້າຫາກວ່າແມ່ບໍ່ຈື່ນ້ຳໜັກຂອງລູກໄດ້ເລີຍ.

| | | |
|---|---|---|
| 11. .(ຊື່ເດັກ) ເວລາຊັ່ງນ້ຳໜັກມື້ເກີດໄດ້ຈັກກຣາມ?<br>***(ບັນທຶກນ້ຳໜັກ ຈາກບັດກວດສຸຂະພາບ, ຖ້າມີ)*** | ຈາກບັດກວດສຸຂະພາບ 1(ກິໂລກຣາມ)__,__ __<br>ຈາກການບອກເລົ່າ..2 (ກິໂລກຣາມ)__,__ __<br>**ບໍ່ຮູ້ຈັກ/ບໍ່ຈື່...................................99998** | |

ຄຳຖາມ 12 : ທ່ານລ້ຽງລູກຄົນນີ້ດ້ວຍນົມແມ່ບໍ່ ? ຖ້າຫາກ ແມ່ ໄດ້ລ້ຽງລູກຄົນນີ້ດ້ວຍນົມແມ່ ແມ່ນໃຫ້ ຂີດອອ້ມ ເລກ1, ຖ້າຫາກຄຳຕອບວ່າ: ບໍ່ໄດ້ລ້ຽງ ແມ່ນ ເລກ2 ແລ້ວຂ້າມໄປ ໂມດູນ IV.

| | | |
|---|---|---|
| **12. ທ່ານລ້ຽງລູກຄົນນີ້ດ້ວຍນົມແມ່ບໍ່ ?** | ແມ່ນ.................................................1<br>**ບໍ່ແມ່ນ.............................................2** | **2⇒ ໂມດູນ IV** |

ຄຳຖາມ13: ພາຍຫຼັງທີ່ທ່ານເກີດລູກຄົນນີ້ດົນປານໃດທ່ານຈື່ງເອົານົມແມ່ໃຫ້ລູກກິນ? ຄຳຖາມນີ້ແມ່ນໝາຍເຖີງໄລຍະເວລາທີ່ແມ່ໄດ້ຄອດລູກອອກມາແລ້ວດົນປານໄດຈື່ງເອົານົມໃຫ້ລູກກິນ .ມັນອາດເປັນໄປໄດ້ພາຍຫຼັງທີ່ແມ່ເກີດລູກແລ້ວແຕ່ບໍ່ມີຄວາມພ້ອມທີ່ຈະເອົານົມໃຫ້ລູກກິນມັນອາດເປັນຍ້ອນຫຼາຍສາຍເຫດເຊັ່ນ: ແມ່ບໍ່ທັນມີນ້ຳນົມ, ແມ່ຍັງອອ່ນເພຍຢູ່ ຫຼື ລູກຍັງອອ່ນເພຍຢູ່, ດັ່ງນັ້ນຄຳຕອບມັນຈື່ງມີໃຫ້ເລືອກ ເປັນຊົ່ວໂມງ, ນາທີ, ເປັນມື້ ແລະທັນທີທັນໄດໂລດ.

| | | |
|---|---|---|
| 13. ພາຍຫຼັງທີ່ທ່ານເກີດລູກຄົນນີ້ ດົນປານໃດທ່ານຈື່ງເອົານົມແມ່ ໃຫ້ລູກກິນ ? | ໃຫ້ກິນໂດຍທັນທີ..............................000<br>ຈຳນວນຊົ່ວໂມງ.......................___ ___<br>ຈຳນວນມື້..............................___ ___<br>**ບໍ່ຮູ້ / ບໍ່ຈື່ .......................................998** | |

## ໂມດູນ IV: ເອສໄອວີ/ເອດສ໌

ຄຳຖາມ1: ທ່ານເຄີຍໄດ້ຍິນເລື່ອງເອສໄອວີຫລືເອດສ໌ບໍ່? ໂລກເອດສ໌ເກີດມາຈາກເຊື້ອຈຸລະໂລກຊະນິດນື່ງ, ເຊີ່ງເຮັດໃຫ້ພູມຕ້ານທານຂອງຮ່າງກາຍ ບໍ່ສາມາດຕ້ານກັບພະຍາດຕ່າງໆ ທີ່ເຂົ້າສູ່ຮ່າງກາຍຂອງຄົນ. ເຊື້ອຈຸລະໂລກຊະນິດນີ້ຕິດຕໍ່ແຕ່ສະເພາະຄົນເທົ່ານັ້ນ.

ການຈົດກ່າຍແມ່ນໃຫ້ຂີດວົງມົນອອ້ມ ເລກ1: ຖ້າຫາກຕອບວ່າເຄີຍໄດ້ຍິນ ແລະ ເລກ2: ຖ້າຕອບວ່າບໍ່ເຄີຍໄດ້ຍິນ.

| | | |
|---|---|---|
| 1. ທ່ານເຄີຍໄດ້ຍິນເລື່ອງເອສໄອວີ ຫລື ເອດສ໌ບໍ່? | ເຄີຍໄດ້ຍິນ.........................................1<br>ບໍ່ເຄີຍໄດ້ຍິນ......................................2 | |

ຄຳຖາມ 2: ໂລກເອດສ໌ສາມາດປ້ອງກັນໄດ້ດ້ວຍການມີເພດສຳພັນກັບຜູ້ບໍ່ຕິດເຊື້ອ ແລະມີຄູ່ຮ່ວມເພດພຽງຜູ້ດຽວ ຫລືບໍ່?
ຄຳຖາມນີ້ແມ່ນເພື່ອທົດສອບວ່າ ແມ່ຈະມີຄວາມຮູ້ພື້ນຖານກ່ຽວກັບ ການປ້ອງກັນໂລກເອດສ໌ ຫຼືບໍ່. ໃຫ້ທ່ານຖາມ ແລະໝາຍເອົາຄຳຕອບທີ່ຖືກຕ້ອງ.

| | | |
|---|---|---|
| 2. ໂລກເອດສ໌ສາມາດປ້ອງກັນໄດ້ ດ້ວຍການມີເພດສຳພັນກັບຜູ້ບໍ່ຕິດເຊື້ອ ແລະມີຄູ່ຮ່ວມເພດພຽງຜູ້ດຽວ ຫລືບໍ່? | ປ້ອງກັນໄດ້........................................1<br>ປ້ອງກັນບໍ່ໄດ້.....................................2<br>ບໍ່ຮູ້ຈັກ.............................................8 | |

ຄຳຖາມ3:ຄຳຖາມນີ້ແມ່ນຢາກເວົ້າເຖິງຄວາມເຊື່ອຂອງແມ່.ໃຫ້ທ່ານຖາມແລະໝາຍເອົາຄຳຕອບທີ່ຖືກຕ້ອງ.

| | | |
|---|---|---|
| 3. ທ່ານຄິດວ່າ ຄົນຜູ້ນີ້ງສາມາດຕິດເຊື້ອເອດສ໌ທາງໃສຍະສາດ (ຜີ) ໄດ້ຫລືບໍ່? | ຕິດໄດ້...............................................1<br>ຕິດບໍ່ໄດ້............................................2<br>ບໍ່ຮູ້ຈັກ...............................................8 | |

ຄຳຖາມ 4: ຄົນເຮົາສາມາດກັນຕົນເອງຈາກເຊື້ອ ເອດສ໌ ໄດ້ ໂດຍການໃຊ້ຖົງຢ່າງອະນາໄມຖືກຕ້ອງທຸກຄັ້ງທີ່ມີການຮ່ວມເພດກັບຄົນອື່ນທີ່ບໍ່ແມ່ນພັນລະຍາ/ສາມີຂອງຕົນບໍ່?ຄຳຖາມນີ້ກໍ່ເຊັ່ນດຽວກັນ ໃຫ້ທ່ານຖາມແລະໝາຍຄຳຕອບໃຫ້ຖືກຕ້ອງ.

| | | |
|---|---|---|
| 4. ຄົນເຮົາສາມາດກັນຕົນເອງຈາກເຊື້ອ ເອດສ໌ ໄດ້ ໂດຍການໃຊ້ຖົງຢ່າງອະນາໄມຖືກຕ້ອງທຸກຄັ້ງທີ່ມີການຮ່ວມເພດສຳພັນກັບຄົນອື່ນທີ່ບໍ່ແມ່ນພັນລະຍາ/ສາມີຂອງຕົນບໍ່? | ກັນໄດ້...............................................1<br>ກັນບໍ່ໄດ້............................................2<br>ບໍ່ຮູ້ຈັກ.............................................8 | |

ແລະຢູ່ໃນຄຳຖາມ: 5 , 6, 7 , 8 , 9, 10, 11, ແມ່ນຢາກຮູ້ວິທີປ້ອງກັນຕົນເອງຈາກການຕິດເຊື້ອໂລກເອດ, ໃຫ້ທ່ານຖາມ ແຕ່ລະຂໍ້ ແລະໝາຍຄຳຕອບແຕ່ລະຄຳຖາມ ໃຫ້ ຖືກຕ້ອງ .

| | | |
|---|---|---|
| 5 . ຄົນເຮົາຕິດເຊື້ອເອດສ໌ໄດ້ບໍ່ຈາກການຖືກຍຸງກັດ? | ຕິດໄດ້.............................................1<br>ຕິດບໍ່ໄດ້..........................................2<br>ບໍ່ຮູ້ຈັກ............................................8 | |

ຄຳຖາມ 6: ຄົນເຮົາສາມາດກັນຕົນເອງຈາກການຕິດເຊື້ອເອດສ໌ ໂດຍບໍ່ຕ້ອງຮ່ວມເພດເລີຍ ໄດ້ຫລືບໍ່? ໃຫ້ທ່ານຂີດອອ້ມຄຳຕອບໃຫ້ຖືກຕ້ອງ.

| | | |
|---|---|---|
| 6. ຄົນເຮົາສາມາດກັນຕົນເອງຈາກການຕິດເຊື້ອເອດສ໌ ໂດຍບໍ່ຕ້ອງຮ່ວມເພດເລີຍ ໄດ້ຫລືບໍ່? | ກັນໄດ້..............................................1<br>ກັນບໍ່ໄດ້............................................2<br>ບໍ່ຮູ້ຈັກ.............................................8 | |

ຄຳຖາມ7.ຄົນເຮົາສາມາດຕິດເຊື້ອໂລກເອດສ໌ໂດຍການກິນອາຫານຮ່ວມກັບຄົນຕິດເຊື້ອໂລກເອດສ໌ ຫລື ບໍ່ ? ໃຫ້ທ່ານຂີດອອ້ມຄຳຕອບໃຫ້ຖືກຕ້ອງ

| | | |
|---|---|---|
| 7.ຄົນເຮົາສາມາດຕິດເຊື້ອໂລກເອດສ໌ ໂດຍການກິນອາຫານຮ່ວມກັບຄົນຕິດເຊື້ອໂລກເອດສ໌ ຫລື ບໍ່ ? | ຕິດໄດ້.............................................1<br>ຕິດບໍ່ໄດ້..........................................2<br>ບໍ່ຮູ້ຈັກ............................................8 | |

ຄຳຖາມ 8 : ຄົນທີ່ມີຮູບລັກສະນະຄືແຂງແຮງສາມາດມີເຊື້ອເອດສ໌ໃນຮ່າງກາຍຂອງລາວໄດ້ຫລື ບໍ່ ?ໃຫ້ທ່ານຂີດອອ້ມຄຳຕອບໃຫ້ຖືກຕ້ອງ.

| | | |
|---|---|---|
| 8. ຄົນທີ່ມີຮູບລັກສະນະຄືແຂງແຮງ ສາມາດມີເຊື້ອເອດສ໌ໃນຮ່າງກາຍ ຂອງລາວໄດ້ຫລືບໍ່ ? | ມີໄດ້...............................................1<br>ບໍ່ມີ.................................................2<br>ບໍ່ຮູ້ຈັກ............................................8 | |

ຄຳຖາມ9: ເຊື້ອເອດສ໌ສາມາດຕິດຕໍ່ຈາກແມ່ຫາລູກໄດ້ຫລືບໍ່?ໃຫ້ທ່ານຂີດອອ້ມຄຳຕອບໃຫ້ຖືກຕ້ອງ, ຖ້າຫາກ ຄຳຕອບເປັນ ເລກ 8 ຫຼື ເລກ 8 ແມ່ນໃຫ້ ຂ້າມໄປຄຳຖາມ 13.

| | | | | |
|---|---|---|---|---|
| 9. ເຊື້ອເອດສ໌ ສາມາດຕິດຕໍ່ຈາກແມ່ ຫາລູກໄດ້ຫລືບໍ່? | | ແມ່ນ | ບໍ່ແມ່ນ | ບໍ່ຮູ້ຈັກ | |
| | ລະຫວ່າງຖືພາ................1 | 2 | 8 | | |
| | ໃນເວລາເກີດລູກ............1 | 2 | 8 | | 2⇒ຂໍ້ 13 |
| | ໂດຍການກິນນົມແມ່........1 | 2 | 8 | | 8⇒ຂໍ້ 13 |

ຄຳຖາມ 10: ຖ້າຄູຜູ້ນຶ່ງມີເຊື້ອເອດສ໌ , ແຕ່ບໍ່ມີອາການເຈັບເປັນ, ລາວຄວນຈະໄດ້ ຮັບອະນຸຍາດໃຫ້ສືບຕໍ່ສິດສອນຫລືບໍ່? ໃຫ້ທ່ານຂີດອອ້ມຄຳຕອບໃຫ້ຖືກຕ້ອງ,

| | | |
|---|---|---|
| 10. ຖ້າຄູຜູ້ນຶ່ງມີເຊື້ອເອດສ໌ , ແຕ່ບໍ່ມີ ອາການເຈັບເປັນ, ລາວຄວນຈະໄດ້ ຮັບອະນຸຍາດໃຫ້ສືບຕໍ່ສິດສອນຫລືບໍ່? | ຄວນໄດ້ຮັບອະນຸຍາດ...........................1<br>ບໍ່ຄວນໄດ້ຮັບອະນຸຍາດ........................2<br>ບໍ່ຮູ້ຈັກ.............................................8 | |

ຄຳຖາມ 11 : ຖ້າທ່ານຮູ້ວ່າເຈົ້າຂອງຮ້ານ ຫລືຜູ້ຂາຍອາຫານຫາກຕິດເຊື້ອເອດສ໌, ທ່ານຈະຊື້ອາຫານຈາກລາວຫລືບໍ່ ? ໃຫ້ທ່ານຂີດອອ້ມຄຳຕອບໃຫ້ຖືກຕ້ອງ,

| | | |
|---|---|---|
| 11. ຖ້າທ່ານຮູ້ວ່າເຈົ້າຂອງຮ້ານ ຫລືຜູ້ ຂາຍອາຫານຫາກຕິດເຊື້ອເອດສ໌, ທ່ານຈະຊື້ອາຫານຈາກລາວຫລືບໍ່ ? | ຊື້.....................................................1<br>ບໍ່ຊື້..................................................2<br>ບໍ່ຮູ້ຈັກ...............................................8 | |

ຄຳຖາມ 12 :ຖ້າສະມາຊິກໃນຄົວເຮືອນຂອງທ່ານໄດ້ຮັບເຊື້ອHIVທ່ານຈະຍັງຮັກສາຄວາມລັບນີ້ໄວ້ ຫລື ບໍ່ ? ໃຫ້ທ່ານຂີດອອ້ມຄຳຕອບໃຫ້ຖືກຕ້ອງ,

| | | |
|---|---|---|
| 12. ຖ້າສະມາຊິກໃນຄົວເຮືອນຂອງ ທ່ານໄດ້ຮັບເຊື້ອ HIV ທ່ານຈະຍັງຮັກ ສາຄວາມລັບນີ້ໄວ້ ຫລື ບໍ່ ? | ຮັກສາໄວ້..........................................1<br>ບໍ່ຮັກສາໄວ້......................................2<br>ບໍ່ຮູ້ຈັກ............................................8 | |

ຄຳຖາມ13: ຖ້າສະມຊິກໃນຄົວເຮືອນຂອງທ່ານເປັນໄຂ້ຍ້ອນຕິດເຊື້ອHIVທ່ານຈະສາມາດເບິ່ງ ແຍງດູແລລາວໃນເຮືອນຂອງທ່ານ ຫລື ບໍ່ ? ຄຳຖາມນີ້ ແມ່ນ ເພື່ອຢາກຮູ້ກ່ຽວກັບ ຄວາມບໍ່ລັງເກດ ຄົນທີ່ມີເຊື້ອ ເອດສ໌ ດັ່ງນັ້ນ ທ່ານຕ້ອງໄດ້ຖາມຄຳຖາມນີ້ ໂດຍສົມມຸດເອົາ.

| | | |
|---|---|---|
| 13. ຖ້າສະມຊິກໃນຄົວເຮືອນຂອງທ່ານເປັນໄຂ້ຍ້ອນຕິດເຊື້ອ HIV ທ່ານຈະສາມາດເບີງແຍງດູແລລາວໃນເຮືອນຂອງທ່ານ ຫລື ບໍ່ ? | ເບິ່ງແຍງ..........................................1<br>ບໍ່ເບິ່ງແຍງ........................................2<br><br>ບໍ່ຮູ້ຈັກ.............................................8 | |

ຄຳຖາມ 15 : ຂ້າພະເຈົ້າບໍ່ຢາກຮູ້ຈັກຜົນການກວດຂອງທ່ານ. ແຕ່ຢາກຮູ້ວ່າທ່ານເຄີຍກວດເລືອດຊອກຫາເຊື້ອ HIV ໄວຣັສ໌ທີເປັນເອດສ໌ຫລືບໍ່? ກອນຈະຖາມຄຳຖາມນີ້ ທ່ານຕ້ອງໄດ້ກວດຄືນຄຳຖາມ5ໂມດູນ III ຖ້າຫາກຢູ່ຄຳຖາມ 5 ຫາກຕອບວ່າ: ເຄີຍໄດ້ກວດຫາເຊື້ອໂລກເອດສ໌ໃນລະຫວ່ງໄປຝາກທ້ອງນັ້ນແມ່ນຂ້າມໄປຖາມຄຳຖາມ18,ຖ້າບໍ່ໄດ້ກວດຢູ່ໃນຄຳຖາມ 5 ຈື່ງຖາມ ຄຳຖາມນີ້.

| | | |
|---|---|---|
| ເບີ່ງຄືນຄຳຖາມ 5 ໂມດູນ III<br>ແມ່ນ ⇨ ໄປຫາຄຳຖາມ 18<br>ບໍ່ແມ່ນ ⇨ ສືບຕໍ່ຖາມຄຳຖາມ 15 | | |
| 15. ຂ້າພະເຈົ້າບໍ່ຢາກຮູ້ຈັກຜົນການກວດຂອງທ່ານ. ແຕ່ຢາກຮູ້ວ່າທ່ານເຄີຍກວດເລືອດຊອກຫາເຊື້ອ HIV ໄວຣັສ໌ ທີເປັນເອດສ໌ ຫລື ບໍ່ ? | ເຄີຍກວດ..........................................1<br>ບໍ່ເຄີຍກວດ.......................................2<br><br>ບໍ່ຮູ້ຈັກີ.............................................8 | 2⇒ຂໍ້ 17 |

ຄຳຖາມ16: ຂ້າພະເຈົ້າບໍ່ຕ້ອງການໃຫ້ທ່ານບອກກ່ຽວກັບຜົນຂອງການກວດ, ແຕ່ວ່າທ່ານຮູ້ກ່ຽວກັບຜົນກວດຂອງ ທ່ານບໍ່ ? ຄຳຖາມນີ້ ແມ່ນຢາກຮູ້ວ່າ: ໃນການທີ່ຜູ້ຕອບຕອບວ່າເຄີຍໄດ້ກວດຫາເຊື້ອໂລກເອດສ໌ ຢູ່ໃນຄຳຖາມ 15 ຄຳຖາມນີ້ ຕ້ອງການຮູ້ວ່າ: ຜູ້ກ່ຽວໄດ້ຮູ້ກ່ຽວກັບຜົນກວດບໍ່.

| | | |
|---|---|---|
| **16. ຂ້າພະເຈົ້າບໍ່ຕ້ອງການໃຫ້ທ່ານບອກ ກ່ຽວກັບຜົນ ຂອງການກວດ, ແຕ່ວ່າທ່ານຮູ້ກ່ຽວກັບຜົນກວດຂອງທ່ານບໍ່ ?** | ຮູ້......................................................1<br>**ບໍ່ຮູ້ຈັກ.............................................2** | |

ຄຳຖາມ 17: ທ່ານໄດ້ໄປກວດດວ້ຍຕົວເອງບໍ່, ມີຜູ້ສະໜອງການກວດໃຫບໍ່,ໄດ້ຍອມໄປກວດ ຫລື ກວດຕາມການສະເໜີຂອງຄົນ ອື່ນບໍ່ ?
ຄຳຖາມນີ້ ແມ່ນຢາກຮູ້ວ່າ : ການທີ່ຜູ້ກ່ຽວໄດ້ໄປກວດຫາເຊື້ອໂລກເອດສ໌ນັ້ນ ແມ່ນຍ້ອນສາເຫດທີ່ຜູ້ອື່ນ ບອກໃຫ້ໄປກວດ ຫຼືວ່າ ມີຜູ້ສະໜອງການກວດໃຫ້ ຫຼື ຜູ້ກ່ຽວຕ້ອງການຢາກໄປກວດເອງ.

| | | |
|---|---|---|
| 17. ທ່ານໄດ້ໄປກວດດວ້ຍຕົວເອງບໍ່, ມີຜູ້ສະໜອງການກວດໃຫ້ບໍ່,ໄດ້ຍອມໄປກວດ ຫລື ກວດຕາມການສະເໜີ **ຂອງຄົນ ອື່ນບໍ່ ?** | ໄປກວດດວ້ຍຕົວເອງ............................1<br>ມີຜູ້ສະໜອງການກວດໃຫ້....................2<br>**ຄົນອື່ນຕ້ອງການໃຫ້ໄປກວດ..................3** | |

ຄຳຖາມ 18 : ທ່ານຮູ້ບໍ່ວ່າຈະໄປກວດເລືອດຊອກຫາເຊື້ອເອດສ໌ໄດ້ຢູ່ໃສ ? ຄຳຖາມນີ້ແມ່ນຢາກຮູ້ວ່າ: ຜູ້ຖືກສຳພາດ ຮູ້ກ່ຽວກັບສະຖານທີ່ໄປກວດຫາເຊື້ອໂລກເອດສ໌.

| | | |
|---|---|---|
| 18. ທ່ານຮູ້ບໍ່ວ່າຈະໄປກວດເລືອດ ຊອກຫາເຊື້ອເອດສ໌ໄດ້ຢູ່ໃສ ? | ຮູ້.....................................................1<br>ບໍ່ຮູ້ຈັກ..............................................2 | |

# ຂໍຂອບໃຈ